ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 5: Fairy Tales (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 2:** ເທບນິຍາຍ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ເທບນິຍາຍເລື່ອງ “ປູ່ເຍີ-ຍ່າເຍີ”<br>- ເທບນິຍາຍເລື່ອງ “ໝາກນໍ້າເຕົ້າປຸງ”</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ເທບນິຍາຍເລື່ອງ “ປູ່ເຍີ-ຍ່າເຍີ”<br>- ເທບນິຍາຍເລື່ອງ “ໝາກນໍ້າເຕົ້າປຸງ”</td><td>ຄຳຖາມຫຼັກ (Questions):<br>1) ເທບນິຍາຍ “ປູ່ເຍີ-ຍ່າເຍີ” ມີເນື້ອໃນເວົ້າເຖິງຫຍັງແດ່?<br>2) ເທບນິຍາຍ “ໝາກນໍ້າເຕົ້າປຸງ” ມີເນື້ອໃນເວົ້າເຖິງຫຍັງ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງ ເນື້ອໃນ ເນື້ອໃນຂອງເທບນິຍາຍ “ປູ່ເຍີ-ຍ່າເຍີ” ແລະ “ໝາກນໍ້າເຕົ້າປຸງ”</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງ ເນື້ອໃນ ຂອງເທບນິຍາຍ “ປູ່ເຍີ-ຍ່າເຍີ” ແລະ “ໝາກນໍ້າເຕົ້າປຸງ”</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
<tr><td colspan="2">- ສື່ການສອນມີ:<br>ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.</td></tr>
</table>

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນ ແລະສິລະປະຂອງເທບນິຍາຍ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 2**

**ເທບນິຍາຍ (ຕໍ່)**

**5. ເນື້ອໃນຂອງເທບນິຍາຍ** ( 30 ນາທີ)

***ກິດຈະກຳ 1:***

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

  1) ເທບນິຍາຍ "ປູ່ເຍີ-ຍ່າເຍີ" ມີເນື້ອໃນເວົ້າເຖິງຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

**5.1 ຄວາມເປັນມາຂອງເທບນິຍາຍ "ປູ່ເຍີ-ຍ່າເຍີ"**

ນານມາແລ້ວມີເມືອງໜຶ່ງຊື່ວ່າເມືອງແຖນໄດ້ເກີດມີເຄືອເຂົາກາດຍັກເຄືອໜຶ່ງຢູ່ທີ່ໜອງຕູ້. ເຄືອເຂົາກາດສູງຂຶ້ນໄປຮອດເມືອງສະຫວັນຊັ້ນຟ້າເຮັດໃຫ້ແສງສະຫວ່າງຂອງດວງຕາເວັນບໍ່ສາມາດສ່ອງໃຫ້ຄວາມອົບອຸ່ນແກ່ພື້ນແຜ່ນດິນໄດ້ຜູ້ຄົນດຳລົງຊີວິດດ້ວຍຄວາມມືດມົວ ແລະ ໜາວເຢັນ. ວັນໜຶ່ງພະຍາຊຸນບູລົມໄດ້ຮຽກເສນາອາມາດປະຊຸມເພື່ອປຶກສາຫາລືວ່າ: ຈະເຮັດວິທີໃດ ? ແຕ່ກໍບໍ່ມີໃຜຂານອາສາໄປຕັດ. ຕໍ່ມາບໍ່ດົນກໍມີຄົນເຖົ້າສອງຜົວເມຍໄດ້ມາກາບທູນພະຍາວ່າ: ພວກຂ້າພະເຈົ້າຊື່ວ່າປູ່ເຍີຍ່າເຍີມີຄວາມຍິນດີຂໍຂານອາສາຕັດເຄືອເຂົາກາດນັ້ນ. ພະຍາສະແດງຄວາມຊົມເຊີຍສອງຜູ້ເຖົ້າທີ່ໄດ້ຍິນຍອມເສຍສະຫຼະສູງຊົນເພື່ອປະເທດຊາດ. ກ່ອນຈະອອກເດີນທາງເຂົາເຈົ້າໄດ້ຮ້ອງຂໍຢ່າງໜຶ່ງວ່າ: ຖ້າພວກຕົນຫາກຕາຍໄປຂໍໃຫ້ປະຊາຊົນທຸກຄົນຢ່າລືມຊື່ຂອງພວກຕົນດ້ວຍ. ພະຍາກໍຮັບປາກ. ຈາກນັ້ນ, ທັງສອງກໍມຸ່ງໜ້າໄປໜອງທີ່ໜອງຕູ້ທັນທີພ້ອມດ້ວຍຂວານຂະໜາດໃຫຍ່. ພວກເຂົາເຈົ້າໃຊ້ເວລາປ້ຳທາງກາງເວັນ ແລະ ທັງກາງຄືນເປັນເວລາ 3 ເດືອນກັບ 3 ວັນຈຶ່ງສາມາປໍ້າເຄືອເຂົາຍັກນັ້ນລົງໄດ້.ແຕ່ດ້ວຍຄວາມໂສກເສົ້າເສຍດາຍຍິ່ງ: ເຄືອເຂົາໄດ້ລົ້ມທັບທັງສອງເຖົ້າທັນທີ.

ໃນທີ່ສຸດແສງສະຫວ່າງກໍກັບມາສູ່ພື້ນໂລກອີກຄັ້ງໜຶ່ງ, ນຳເອົາຄວາມອົບອຸ່ນມາສູ່ມວນມະນຸດ, ພືດພັນ ແລະສັດທັງຫຼາຍ. ການດຳລົງຊີວິດເລີ່ມກັບຄືນຄວາມເປັນປົກກະຕິອີກຄັ້ງໃໝ່.

ພະຍາຊຸນບູລົມພ້ອມດ້ວຍບ່າວໄພ່ລາສະດອນໄດ້ຈັດພິທີສິ່ງສະການປູ່ເຍີຍ່າເຍີ ຢ່າງສົມກຽດ. ນັບຕັ້ງແຕ່ນັ້ນເປັນຕົ້ນມາເພື່ອຈາລຶກຄຸນງາມຄວາມດີຂອງປູ່ເຍີຍ່າເຍີ. ຄົນລາວເຮົາຈຶ່ງມັກຕື່ມຄຳຫ້ອຍທ້າຍ " ເຍີໆ " ໃນການປາກເວົ້າຂອງຕົນສະເໜີເຊັ່ນໃນຄຳວ່າ: ໄປເຍີ,ມາເຍີ,ເມືອເຍີ,... ທັງໄດ້ເຮັດໂຂນ ຫຼື ຮູບສັນຍາລັກຂອງທັງສອງໄວ້ໃຫ້ສັກກະລະນັບຖືສືບຕໍ່ກັນມາເຖິງເທົ່າທຸກວັນນີ້ (ພູວົງ ໝໍ່ດາລາ ແລະຄະນະ, 2018).

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**5.2 ເທບນິຍາຍ "ປູ່ເຍີ-ຍ່າເຍີ"**

ມື້ໜຶ່ງຍ່າເຍີກຳລັງນັ່ງແນມເບິ່ງຂຶ້ນເມືອຫົວພູແດນໄກ. ໃນຂະນະທີ່ລາວນັ່ງຢູ່ຫັ້ນ, ມີກາລະສາດຜູ້ເປັນລູກແລ່ນເຂົ້າມາທາງຫຼັງຖາມວ່າ:

- ແມ່ເຮີຍ! ແມ່, ພໍ່ລູກເດ ດຽວນີ້ພໍ່ຂອງລູກຢູ່ໃສ? ເປັນຫຍັງໃຜກໍເວົ້າວ່າເປັນລູກບໍ່ມີພໍ່? ແມ່ເວົ້າໃຫ້ລູກຟັງແດ່!

ເມື່ອໄດ້ຍິນແນວນັ້ນ, ຍ່າເຍີຈ້ອງເບິ່ງໜ້າລູກດ້ວຍຄວາມເປັນຫ່ວງເປັນໃຍແລ້ວແກວ່ງຫົວດ້ວຍຄວາມເຈັບແຄ້ນແໜ້ນໃຈ ແລະ ແມ່ຕອບວ່າ:

- ພຸ້ນລູກເອີຍ ພໍ່ຂອງລູກຢູ່ພຸ້ນ...ແມ່ທັງເວົ້າທັງຊີ້ມືໄປທາງຫົວພູແດນໄກທີ່ຕິດກັບຕີນຟ້າກ່ອງ.

- ແມ່! ເປັນແນວໃດພໍ່ຂອງລູກຢູ່ຫົວພູນັ້ນບໍ?

ເມື່ອໄດ້ຍິນລູກຖາມຈັ່ງຊັ້ນຍ່າເຍີໄດ້ເລົ່າເລື່ອງທີ່ຝັງໄວ້ໃນໃຈຂອງຕົນໃຫ້ລູກຟັງດ້ວຍຄວາມໂສກເສົ້າວ່າ "ພໍ່ຂອງລູກຊື່ວ່າປູ່ເຍີ ແມ່ນີ້ກໍບໍ່ແມ່ນຄົນທຳມະດາ". ພໍ່ແມ່ນີ້ລ້ວນແຕ່ແມ່ນເຊື້ອພະອິນ, ພະພົມທາງເມືອງຟ້າໄດ້ແຕ່ງລົງມາສະເຫວີຍເມືອງລຸ່ມເພື່ອຄຸ້ມຄອງມະນຸດຢູ່ໃນໂລກນີ້.

ຕັ້ງແຕ່ຄາວດຶກດຳບັນເຊິ່ງຫ່າງໄກພວກເຮົາເປັນເວລາເຫິງນານແລ້ວມະນຸດໄດ້ດຳລົງຊີວິດຢູ່ກັບຄວາມທຸກຍາກລຳບາກ, ອຶດສະບັ້ນສັ່ນໜາວຢູ່ໃນຫົ່ມຟ້າອັນມືດມົນ. ລົມມິດຕັດມິດແຖປັດເປົ່າຈົນກະທັ້ງເຮັດໃຫ້ເນື້ອກາຍ ເໝືອນຈະຂາດເປັນບັ້ນ. ມວນມະນຸດໃນເປີງນັ້ນເປືອຍເອິກເປືອຍອາງເຕັມແຕ່ຂົນບໍ່ເຮັດແນວໃດ ມີແຕ່ນອນດິນ, ກິນຫຍ້າພາຊີວິດຂອງຕົນດຳລົງຊີວິດໄປຄືເຊັ່ນນັ້ນ. ເມື່ອເຫັນຕາເວັນພຸ່ງຂຶ້ນ ແລະ ແສງແດດສ່ອງລົງມາຈຶ່ງເຮັດໃຫ້ຜູ້ຄົນ, ຕົ້ນໄມ້ໃບຫຍ້າ, ສັດສາວາສິ່ງທັງຫຼາຍຄ່ອຍລຸກຕື່ນຂຶ້ນມາ. ແຕ່ເມື່ອຕາເວັນສູນໄປແລ້ວໜ້າດິນກໍເຕັມໄປດ້ວຍຄວາມມືດ ແລະ ເຢັນກະດ້າງມວນມະນຸດພາກັນສະບັ້ນສັ່ນໜາວມວນມະນຸດພາກັນໄປເປັນໝູ່ເພື່ອນຳແສງຕາເວັນ. ເຂົານຳໄປ...ນຳໄປ!ແຕ່ບໍ່ທົນຕໍ່ຄວາມອິດເມື່ອຍ, ບໍ່ທົນຕໍ່ຄວາມຂາດເຂີນ ແລະ ຫິວໂຫຍ,ເຂົາກໍລົ້ມຫາຍຕາຍເສຍເປັນຈຳນວນຫຼວງຫຼາຍແຕ່ກໍຍັງໄປບໍ່ເຖິງຕາເວັນ, ເມື່ອເຫັນແນວນັ້ນພໍ່ຂອງລູກຍາມໃດກໍເປັນຫ່ວງຄົ້ນຄິດຊອກຫາທິດທາງແກ້ໄຂໃຫ້ມວນມະນຸດພົ້ນຈາກຄວາມທຸກຍາກລຳບາກ. ພໍ່ຂອງລູກໄດ້ອອກເດີນທາງໄປເຖິງຫົວພູແດນໄກທີ່ມີສາຍນ້ຳໂຕນຕາດສຽງດັງສະນັ່ນ. ອາຍນ້ຳແຜ່ລະອອງຂຶ້ນມາມົວໆເໝືອນດັ່ງກຸ່ມເມກທີ່ປົກຫຸ້ມຈອມພູ. ອາກາດໜາວຊຶມເຂົ້າຕົນຕົວຂອງຄົນເຮົາຈົນປວດກະດ້າງທົ່ວຊີ້ນ, ທົ່ວໜັງເໝືອນດັ່ງມີປາຍເຂັມ ແລະ ສອນສຽບ. ຢູ່ໃນກາງຕາດທີ່ເຕັມໄປດ້ວຍເມກໝອກນັ້ນ ມີຕົ້ນໄມ້ມະນີໂຄດເກີດຂຶ້ນ, ພໍ່ຂອງເຈົ້າໄດ້ເກັບເອົາໝາກໄມ້ນັ້ນມາກິນ. ຍ້ອນໄດ້ກິນໝາກໄມ້ນັ້ນພໍ່ຂອງລູກຈຶ່ງຮູ້ສຶກວ່າຮ່າງກາຍມີກຳລັງອັນແຮງກ້າ. ແຕ່ນັ້ນມາພໍ່ຂອງລູກກໍໄດ້ໄປທົ່ວທຸກຫົນແຫ່ງ ແລະ ເອົາເຫື່ອແຮງຂອງຕົນຊ່ວຍມວນມະນຸດຕ້ານກັບຄວາມສະບັ້ນສັ່ນໜາວ, ຕ້ານກັບຜີສາງນາງຮ້າຍແຕ່ມະນຸດກໍຍັງມີຄວາມທຸກຍາກລຳບາກ. ດັ່ງນັ້ນ, ພໍ່ຂອງລູກຈຶ່ງມີຄວາມໂສກເສົ້າຫງອມເຫງົາ ແລະ ຕັດສິນໃຈຫາວິທີເພື່ອຊ່ວຍມວນມະນຸດໃຫ້ມີຄວາມສຸກສະບາຍ. ນັບແຕ່ນັ້ນມາຢູ່ເມືອງລຸ່ມນີ້ເຖິງວ່າພະອິນ ພະພົມອອກຄຳສັ່ງຫ້າມຂຶ້ນເມືອງຟ້າກໍຕາມ ພໍ່ຂອງລູກກໍນຳຕົນຂຶ້ນເມືອດ້ວຍການສ່ຽງໄພໄດ້ເຫາະຂຶ້ນໄປສູ່ຕາເວັນເຊິ່ງເປັນເຈົ້າຢູ່ສູງທີ່ມີໂງ່ນໄຟອັນມະຫາສານ, ເວລາໃດກໍຮຸ່ງແຈ້ງສະເໝີ. ພໍ່ຂອງລູກໄດ້ລັກເອົາໄຟນັ້ນກັບມາຍັດໃສ່ໃຈໂລກ, ກຸ່ມໄຟເລີຍໄໝ້ລາມໄປທົ່ວໃຈໂລກ ແລະ ໄໝ້ລົງຂອບແຈອັນເລິກລັບ, ເຮັດໃຫ້ໂລກຂອງເຮົາມີຄວາມອົບອຸ່ນຂຶ້ນ, ເຮັດໃຫ້ສັດສາ

ວາສິ່ງທັງຫຼາຍແຕກແມ່ແຜ່ລູກຢ່າງໄວວາ. ນັບແຕ່ມື້ມີໄຟ, ຊີວິດຂອງມວນມະນຸດໄດ້ມີການປ່ຽນແປງຫຼາຍ. ຢູ່ໃນທົ່ວທຸກຫົນແຫ່ງ ສຽງຮ້ອງລຳທຳເພງໄດ້ຟົດຟື້ນໄປທົ່ວໂລກເພື່ອສັນລະເສີນຜົນງານອັນສະຫງ່າລາສີຂອງພໍ່ເຈົ້າ.

ມີມື້ໜຶ່ງ, ພະອິນຢູ່ເມືອງຟ້າໄດ້ສົ່ງສາຍຕາທິບຜ່ານກ້ອນເມກລົງມາ, ເຫັນບັນດາກ້ານດວງດອກຂອງພຶກສາຊາດທັງຫຼາຍປົ່ງຂຶ້ນທົ່ວປ່າດົງ. ມວນມະນຸດກໍ່ພາກັນເຮັດໄຮ່ທຳນາບາງຜ່ອງກໍເຮັດໄຮ່ເຮັດສວນ ແລະ ບູລະນະສ້າງສາຫຼາຍ ເໝືອນດັ່ງຝູງໝົດຝູງປວກ. ດັ່ງນັ້ນ, ພະອິນຈຶ່ງຮຽກພໍ່ເຈົ້າໄປໃສ່ໂທດ, ພໍ່ຂອງເຈົ້າຖືກພະອິນຍັດໄຟເຂົ້າທ້ອງໄຟໄໝ້ພໍ່ເຈົ້າເສຍໄປ, ຄາບ (ຊາກຊົບ) ຂອງພໍ່ເຈົ້າໄດ້ກາຍເປັນພູໄຟມະໄລກັນໃນໃຈຂອງພູໄຟມະໄລກັນນັ້ນເວລາໃດກໍໄໝ້ເໝືອນດັ່ງວ່າໄຟນັ້ນໄໝ້ລາມດວງໃຈຂອງພໍ່ເຈົ້າເທົ້າທຸກວັນນີ້. ບາງຄັ້ງພູໜ່ວຍນັ້ນໄດ້ພົ່ນໄຟອອກມາບໍ່ຈັກວ່າເທົ່າໃດມື້ເທົ່າໃດຄືນຈຶ່ງເຊົາ.

ເຖິງວ່າພໍ່ຂອງເຈົ້າໄດ້ເສຍໄປແລ້ວກໍ່ຕາມ, ເພິ່ນກໍ່ຍັງເປັນຫ່ວງມວນມະນຸດທີ່ຖືກດັບສູນຍ້ອນຄວາມສະບັ້ນສັ່ນໜາວ, ຜູ້ໃດກໍ່ຄິດຮອດຮ້ອງໄຫ້ໄຕ່ຕາມເຖິງບຸນຄຸນພໍ່ເຈົ້າ. ແຕ່ເຮັດແນວໃດກໍ່ເອົາຄືນບໍ່ໄດ້ເພາະຢ້ານລິດເດດຂອງພະອິນຢູ່ເມືອງຟ້ານັບແຕ່ມື້ພໍ່ເຈົ້າຕາຍແມ່ໄດ້ນຳເຈົ້າເຂົ້າມາລັກລີ້ຢູ່ໃນປ່າ ເພື່ອຫຼີກເວັ້ນຈາກການປອງຮ້າຍຂອງພະອິນ. ດຽວນີ້ລູກໃຫຍ່ສູງຈູງໜ້າມາແລ້ວລູກຕ້ອງໄດ້ກະທຳຕາມແບບຢ່າງຂອງພໍ່ເຈົ້າຄື: ຊ່ວຍເຫຼືອມວນມະນຸດໃຫ້ພົ້ນຈາກຄວາມທຸກຍາກລຳບາກເໝືອນກັບພໍ່ເຈົ້າ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**6. ເທບນິຍາຍເລື່ອງ “ໝາກນ້ຳເຕົ້າປຸງ”** (30 ນາທີ)

**ກິດຈະກຳ 2:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເທບນິຍາຍ “ໝາກນ້ຳເຕົ້າປຸງ” ມີເນື້ອໃນເວົ້າເຖິງຫຍັງ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

ເຖົ້າແກ່ບູຮານເຄີຍຖືກັນວ່າ ຄົນລາວເປັນລູກເຕົ້າເຜົ່າແຖນ ເຊິ່ງເກີດຈາກໝາກນ້ຳເຕົ້າໃຫຍ່ໜ່ວຍໜຶ່ງເອີ້ນວ່າ “ໝາກນ້າເຕົ້າປຸງ” ໂດຍມີນິທານເກົ່າເລົ່າສືບກັນມາວ່າ: ໃນກາລະເມື່ອກ່ອນພຸ້ນໂລກເຮົານີ້ຍັງເປັນດິນເປັນຫຍ້າເປັນຟ້າເປັນແຖນຢູ່ເມືອງບົນຄົນຢູ່ເມືອງລຸ່ມ.ລະຫວ່າງຄົນ ແລະ ແຖນເຄີຍໄປມາຫາສູ່ກັນຢູ່ບໍ່ຂາດ.ໂດຍອາໄສເຄືອເຂົາກາດພາດແຕ່ເມືອງລຸ່ມກ່າຍຂຶ້ນຖຸງເມືອງແຖນ ອັນມີພະຍາແຖນລົງມາປົກຄອງ ແລະ ນຳພາສ້າງສາທຳມາຫາກິນ.

ປາງນັ້ນ ຍັງມີຂຸນໃຫຍ່ທັງສາມທີ່ພະຍາແຖນໄດ້ສົ່ງລົງມາສ້າງສາເມືອງລຸ່ມ, ຜູ້ໜຶ່ງຊື່ວ່າປູ່ລາງເຊີງ, ຜູ້ໜຶ່ງຊື່ຂຸນເຄັດ, ອີກຜູ້ໜຶ່ງຊື່ວ່າຂຸນຄານ. ພະຍາແຖນຫຼວງໄດ້ສັ່ງວ່າ ຄົນເມືອງລຸ່ມກິນເຂົ້າກໍໃຫ້ບອກ ໃຫ້ໝາຍກິນແລງ ກິນງ່າຍກໍໃຫ້ບອກແຖນ, ເມື່ອໄດ້ກິນອັນໃດດີອັນໃດແຊບກໍໃຫ້ແບ່ງສ່ວນສົ່ງໃຫ້ແຖນເປັນຕົ້ນວ່າໄດ້ກິນຊີ້ນໃຫ້ສົ່ງຂາໄດ້ກິນປາໃຫ້ສົ່ງຮ້ອຍແກ່ແຖນ, ພໍ່ແຖນຫຼວງຄອງກິນພາເຂົ້າພໍ່ຄອງກິນພາງ່າຍ, ຄາວຕໍ່ມາຄົນທັງຫຼາຍໂລດເລີຍບໍ່ຟັງຄວາມແຖນກິນເຂົ້າກໍບໍ່ບອກໝາຍ, ກິນແລງກິນງາຍກໍບໍ່ບອກບໍ່ຂອບ, ໄດ້ກິນຊີ້ນກໍບໍ່ຍອມສົ່ງຂາ, ໄດ້ກິນປາກໍ່ບໍ່ຍອມສົ່ງຮ້ອຍ. ເຫດນັ້ນພະຍາແຖນຈຶ່ງບັນດານໃຫ້ນ້ຳຖ້ວມເມືອງລຸ່ມ ເຮັດໃຫ້ຄົນທັງຫຼາຍໂລດຕາຍໝົດ ຍັງເຫຼືອແຕ່ຂຸນທັງສາມ, ເຂົາເຈົ້າຈຶ່ງໄດ້ພາກັນເອົາໄມ້ຂ່າແຮ້ງແປງເປັນແພ ເອົາແປງເຮືອນແປງເປັນຟ້າແລ້ວພາກັນເຂົ້າໄປຢູ່ໃນແພນັ້ນ. ເມື່ອລົມຕີຟອງເຟືອນຟາດນ້ຳຈຶ່ງພັດເອົາແພນັ້ນຂຶ້ນຮອດເມືອງແຖນ. ເມື່ອພະຍາມແຖນເຫັນທັງສາມຈຶ່ງ

ຖາມວ່າ: “ສູ່ເຈົ້າມາຫາຕູເຮັດຫຍັງສູ່ເຈົ້າເຫຼົ່າບໍ່ຟັງຄວາມຕູ ສູຈັກເປັນສັນໃດກໍແລ້ວແຕ່ສູແລ” ເມື່ອນັ້ນຂຸນທັງສາມຈຶ່ງເລົ່າເຫດການເມືອງລຸ່ມ ໃຫ້ພະຍາແຖນຟັງທຸກປະການ. ຫຼັງຈາກນັ້ນ, ພະຍາແຖນຈຶ່ງສັ່ງໃຫ້ຂຸນທັງສາມໄປພັກຢູ່ທີ່ດອນກາງບຶງແຫ່ງໜຶ່ງໃນເມືອງແຖນຊື່ວ່າ “ດອນບຶງແຖນລໍ” ເປັນການຊົ່ວຄາວ.

ເມື່ອນ້ຳບົກແຫ້ງລົງແລ້ວ ຂຸນທັງສາມກໍຄິດຮອດເມືອງລຸ່ມຈຶ່ງພາກັນເຂົ້າຫາພະຍາແຖນ ແລະ ເວົ້າວ່າ “ຕູຂ້ອຍນີ້ຢູ່ເມືອງບົນບໍ່ແກວ່ນແລ່ນຢູ່ເມືອງຟ້າບໍ່ເປັນ ຕູຂ້ອຍຂໍຄືນເມືອຢູ່ຊັ້ນເມືອງລຸ່ມກິນປາເມືອເຮັດນາຢູ່ເມືອງລຸ່ມກິນເຂົ້າດັ່ງເກົ່າເຫຼົ່າສອງທີເທີ້ນ” ພໍໄດ້ຟັງດັ່ງນັ້ນພະຍາແຖນກໍ່ເຫັນດີນຳ ແລະ ແຕ່ງໃຫ້ຂຸນທັງສາມລົງມາສ້າງເມືອງລຸ່ມອີກ. ຄາວນີ້ພະຍາແຖນໄດ້ມອບຄວາຍຕູ້ໃຫ້ໂຕໜຶ່ງເພື່ອໃຊ້ໃນການເຮັດນາ. ພາຍຫຼັງທີ່ໄດ້ຮັບຄຳສັ່ງຈາກພະຍາແຖນແລ້ວຂຸນທັງສາມກໍພາກັນອອກຈາກດອນແຖນລົງມາເມືອງລຸ່ມ. ເມື່ອລົງມາຮອດແລ້ວກໍ່ພ້ອມພາກັນຖາງປ່າຫຍ້າມີໜູເຮັດນາໃສ່ດິນແຫ່ງໜຶ່ງຕັ້ງຢູ່ລຸ່ມແຖນນັ້ນ ໂດຍອາໄສຄວາຍຕູ້ທີ່ພະຍາມອບໃຫ້. ເຂົາເຈົ້າໄດ້ພາກັນສັບຊ່າວເປັນນາ, ດິນແຫ່ງນັ້ນຈຶ່ງມີຊື່ວ່າ “ນານ້ອຍອ້ອຍໜູ” ສືບມາ.

ນານປະມານສາມປີຄວາຍຕູ້ໂຕນັ້ນເລີຍຕາຍ, ເຂົາເຈົ້າໄດ້ປະຊາກຄວາຍນັ້ນໄວ້ທີ່ນານ້ອຍອ້ອຍໜູ. ຕໍ່ມາໄດ້ມີເຄືອໝາກນ້ຳເຕົ້າປຸງອອກຈາກຮູດັງຄວາຍ ແລ້ວເກີດເປັນໝາກນ້ຳເຕົ້າໃຫຍ່ໜ່ວຍໜຶ່ງທໍ່ກັບຮີນໃສ່ເຂົ້າຮຽກວ່າ “ໝາກນ້າເຕົ້າປຸງ” ຢູ່ພາຍໃນໝາກນ້ຳເຕົ້ານັ້ນຊໍ້າພັດມີສຽງເວົ້າຈາຮ້ອງໂຮດັງກ້ອງເປັນອືກກະທຶກນຶກນອງ. ຂຸນທັງສາມເຫັນດັ່ງນັ້ນ, ກໍມີຄວາມປະຫຼາດ ແລະ ສົນໃຈເປັນຢ່າງຍິ່ງ ທັນໃດນັ້ນ ປູ່ລາງເຊີນຈຶ່ງດັງໄຟຂຶ້ນເຜົາເຫຼັກຊີຈີນແດງຊີໝາກນ້ຳເຕົ້າປຸງໜ່ວຍປະຫຼາດນັ້ນທັນທີ, ພໍຊີຊອດແລ້ວກໍ່ມີຄົນບຸບຽດກັນອອກ, ແຕ່ວ່າອອກໄດ້ເທື່ອລະເລັກເທື່ອລະນ້ອຍ ອອກມາດ້ວຍຄວາມລຳບາກ ແລະ ຊ້ານານເນື່ອງຈາກມັນຮູນ້ອຍໂພດເມື່ອເຫັນດັ່ງນັ້ນ ຂຸນຄານຈຶ່ງເອົາສິ່ວໄປເຈາະຕື່ມແປງຮູນັ້ນໃຫ້ໃຫຍ່ກວ່າເກົ່າ, ເທື່ອນີ້ຄົນທັງຫຼາຍຈຶ່ງອອກມາສະບາຍ, ຫຼູຫຼັ່ງທັ່ງເທກັນອອກມາທັງຍິງທັງຊາຍພ້ອມດ້ວຍສິນບັດເຂົ້າຂອງເງິນທອງ, ງົວຄວາຍຊ້າງມ້າໝາໝູເປັດໄກ່ ເປັນອັນມາກຫຼູຫຼັ່ງອອກມາສາມມື້ສາມຄືນຈຶ່ງໝົດ. ເມື່ອອອກໝົດແລ້ວຂຸນທັງສາມຈຶ່ງຈັດແບ່ງຄົນເຫຼົ່ານັ້ນອອກເປັນໝູ່ໆຮຽກຊື່ຕ່າງກັນເພື່ອບໍ່ໃຫ້ສັບ.

ຄົນຈຳພວກທີ່ອອກຈາກຮູຊີນັ້ນແມ່ນລາວເທີງ, ປັນອອກເປັນສອງໝູ່ ໝູ່ໜຶ່ງຮຽກວ່າ “ໄທລົມ” (ຊາວລົມ), ອີກໝູ່ໜຶ່ງຮຽກວ່າ “ໄທວີ”(ຊາວວີ). ສ່ວນທີ່ອອກຕາມຮູສິ່ວນັ້ນເປັນລາວລຸ່ມ. ປັນອອກເປັນສາມໝູ່ ໝູ່ໜຶ່ງຮຽກວ່າ “ໄທເລີງ”,”ໄທລໍ” ແລະ “ໄທຄວາງ” , ສ່ວນໝູ່ທີ່ອອກມາສຸດທ້າຍນັ້ນຮຽກວ່າ “ລາວສູງ”. ເມື່ອຈັດດັ່ງນັ້ນແລ້ວ ປູ່ລາງເຊີງຍັງໄດ້ບອກສອນໃຫ້ຄົນທັງຫຼາຍຮູ້ຈັກຮັກແພງກັນນັບຖືກັນ ເປັນອ້າຍເປັນນ້ອງ ແລະ ໃຫ້ຖືເປັນຊາດດຽວກັນ. ຍ້ອນຄົນທັງຫຼາຍເກີດມາຈາກໝາກນ້ຳເຕົ້າປຸງໜ່ວຍດຽວກັນກໍ່ເໝືອນອອກມາຈາກທ້ອງແມ່ດຽວກັນຜູ້ອອກມາກ່ອນ ໃຫ້ຖືເປັນອ້າຍ ຫຼື ເອື້ອຍ, ຜູ້ອອກລຸນໃຫ້ຖືເປັນນ້ອງຕາມລຳດັບ. ນອກນັ້ນ ປູ່ລາງເຊີງຍັງໄດ້ສອນຄົນທັງຫຼາຍຮູ້ຈັກທຳມາຫາກິນລ້ຽງຊີບ, ຮູ້ຈັກປູກຢ້າວແປງເຮືອນ ແລະ ສ້າງຄອບຄົວມີຜົວເມຍ. ແຕ່ນັ້ນມາເຂົາເຈົ້າຈຶ່ງເກີດມີລູກຍິງລູກຊາຍຢ່າງຫຼວງຫຼາຍ. ປູລາງເຊີງໄດ້ບອກສອນໃຫ້ລູກຫຼານຮູ້ຈັກຮັກພໍ່ແມ່ປູ່ຍ່າຕາຍາຍໄດ້ສ້າງສົມໄວ້ໃຫ້.

ຍ້ອນໄດ້ຮັບການອົບຮົມສັ່ງສອນຈາກຂຸນແຖນທັງສາມ ຄົນທັງຫຼາຍຈຶ່ງເຄົາລົບນັບຖືສະແດງຄວາມຮູ້ບຸນຄຸນຂຸນແຖນທັງສາມຢ່າງສູງສົ່ງ ແລະ ຮຽກເປັນປູ່ເປັນຕານັບແຕ່ນັ້ນມາ. ຄົນທັງຫຼາຍໄດ້ແຜ່ຂະຫຍາຍອອກຢ່າງກວ້າງຂວາງບາງຄາວກໍເຕົ້າໂຮມກັນເຂົ້າເປັນເອກະພາບ. ບາງຄາວກໍແຍກອອກເປັນຫຼາຍຈຸຫຼາຍເຫຼົ່າຫຼາຍເຜົ່າຫຼາຍກໍ. ເຖິງຈະຕົກໄປຢູ່ແຫ່ງໃດຄົນເຫຼົ່ານັ້ນກໍຍັງນັບຖືກັນວ່າເປັນອ້າຍເປັນນ້ອງເຊື້ອສາຍດຽວກັນເຊັ່ນ: ລາວເທິງຖືວ່າເປັນອ້າຍກົກ, ລາວລຸ່ມເປັນນ້ອງກາງ, ລາວສູງເປັນນ້ອງຫຼ້າເຊິ່ງປະຊາຊົນລາວຕາມທ້ອງຖິ່ນຕ່າງໆ ຍັງນັບຖືກັນກິນເຂົ້າ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ເຊົາເຮືອນນຳກັນໂດຍບໍ່ຄິດຄ່າລາຄາໃດໆ. ໂດຍສະເພາະຢ່າງຍິ່ງ ແມ່ນທີ່ຢູ່ໃກ້ຄຽງກັນເມື່ອມີວຽກກໍຊ່ວຍເຫຼືອກັນເຮັດ. ເມື່ອມີພິທີຕາມປະເພນີຮີດຄອງເປັນຕົ້ນວ່າ ແຕ່ງດອງງານບຸນຕ່າງໆ ກໍມີການປ່າວເຕືອນບອກເຖິງກັນແລ້ວເຕົ້າໂຮມກັນເຮັດຈົນກາຍເປັນປະເພນີສືບມາ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).





➢ **ສະຫຼຸບ:**

- ແມ່ນເທບນິຍາຍສ່ອງແສງປະຫວັດສາດ
- ຕົວລະຄອນ ແລະ ເຫດການ ແມ່ນເຄິ່ງປະຫວັດສາດ ແລະເຄິ່ງອັນນະຄະດີ
- ແມ່ນຄວາມສຳນຶກລະຫວ່າງຄົນກັບແຖນ: ເມື່ອກ່ອນເຄີຍໄປມາຫາສູ່ກັນ, ພະຍາແຖນສົ່ງຂຸນໃຫຍ່ທັງສາມລົງມາສ້າງເມືອງລຸ່ມ ແລະໃຫ້ຄຳສັ່ງສອນຫຼາຍຢ່າງ.
- ສາເຫດທີ່ພາໃຫ້ເກີດມີນ້ຳຖ້ວມ: ຍ້ອນຄົນບໍ່ຟັງຄວາມແຖນ, ບໍ່ປະຕິບັດຕາມຄຳທີ່ແຖນບອກ, ແຖນເລີຍບັນດານໃຫ້ເກີດນ້ຳຖ້ວມ.
- ການກຳເນີດຂອງເຜົ່າລາວ: ເມື່ອນ້ຳແຫ້ງຂຸນທັງສາມກັບມາຢູ່ເມືອງລຸ່ມອີກ, ແຖນໄດ້ມອບຄວາຍຕູ້ໃຫ້ໂຕໜຶ່ງເຮັດນາ, ຕໍ່ມາຄວາຍເລີຍຕາຍ ເລີຍມີເຄືອໝາກນ້ຳເຕົ້າປຸງປົ່ງອອກຈາກຮູດັງຄວາຍ ເກີດເປັນໝາຍໃຫຍ່ ມີຄົນລົມກັນຢູ່ທາງໃນ
- ນ້ຳໃຈອິດທົນຂອງຂຸນທັງສາມຕໍ່ການຊ່ວຍເຫຼືອມະນຸດ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເນື້ອໃນຂອງເທບນິຍາຍ "ປູ່ເຍີ-ຍ່າເຍີ"
  - ເນື້ອໃນຂອງເທບນິຍາຍ "ໝາກນ້ຳເຕົ້າປຸງ"

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1 ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ